**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງກະສິກຳ ແລະ ປ່າໄມ້ ເລກທີ.....3349..../ກປ

ນະຄອນຫຼວງວຽງຈັນ, ວັນທີ....04..ຕຸລາ 2016

# ຄຳແນະນຳ

## ກ່ຽວກັບການຈັດຕັ້ງຜັນຂະຫຍາຍຄຳສັ່ງ ສະບັບເລກທີ 28/ນຍ, ລົງວັນທີ 16 ສິງຫາ 2016 ວ່າດ້ວຍການເພີ່ມທະວີຄວາມຮັບຜິດຊອບ ຕໍ່ການປ້ອງກັນ ແລະ ກຳຈັດຕັກແຕນຝູງໄມ້ປ່ອງ ຢູ່ແຂວງພາກເໜືອ, ສປປ ລາວ

ເຖິງ: - ທ່ານ ຫົວໜ້າຫ້ອງການ, ບັນດາກົມ ແລະ ສະຖາບັນອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້;
- ທ່ານ ຫົວໜ້າພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງວຽງຈັນ.

- ອີງຕາມ ກົດໝາຍວ່າດ້ວຍການປ້ອງກັນພືດ ສະບັບເລກທີ 06/ສພຊ, ລົງວັນທີ 09 ທັນວາ 2008;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 262/ນຍ, ລົງວັນທີ 28 ມິຖຸນາ 2012 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງກະສິກຳ ແລະ ປ່າໄມ້;
- ອີງຕາມ ຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 28/ນຍ, ລົງວັນທີ 16 ສິງຫາ 2016 ວ່າດ້ວຍການເພີ່ມທະວີຄວາມຮັບຜິດຊອບ ຕໍ່ການປ້ອງກັນ ແລະ ກຳຈັດຕັກແຕນຝູງໄມ້ປ່ອງ ຢູ່ແຂວງພາກເໜືອ, ສປປ ລາວ;
- ອີງຕາມ ຂໍ້ຕົກລົງ ສະບັບເລກທີ 48/ຄປຄພຊ, ລົງວັນທີ 30 ມິຖຸນາ 2015 ວ່າດ້ວຍການແຕ່ງຕັ້ງຄະນະກຳມະການສະເພາະກິດ ເພື່ອແກ້ໄຂບັນຫາການລະບາດ ຂອງຕັກແຕນ ແລະ ໜູຂີ ຢູ່ແຂວງຫຼວງພະບາງ ແລະ ບາງແຂວງພາກເໜືອ.

ເພື່ອຮັບປະກັນຄວາມເປັນເອກະພາບ ໃນການຈັດຕັ້ງຜັນຂະຫຍາຍຄຳສັ່ງ ສະບັບເລກທີ 28/ນຍ, ລົງວັນທີ 16 ສິງຫາ 2016 ໃຫ້ເຂົ້າສູ່ພາກປະຕິບັດຕົວຈິງ, ສາມາດປ້ອງກັນ, ຈຳກັດຕັກແຕນຝູງໄມ້ປ່ອງ ໃຫ້ທັນການ ແລະ ຖືກວິທີ, ມີປະສິດທິພາບສູງ ນັ້ນ,

## ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ອອກຄຳແນະນຳ:

1. ໃຫ້ ພະແນກກະສິກຳ ແລະ ປ່າໄມ້ ແຂວງພາກເໜືອ ສົມທົບກັບອົງການປົກຄອງເມືອງ ແລະ ບ້ານ ສືບຕໍ່ຫັນເອົາພະນັກງານລົງໂຄສະນາເຜີຍແຜ່ຂໍ້ມູນຂ່າວສານດ້ານວິຊາການ ກ່ຽວກັບວົງຈອນຊີວິດ, ການລະບາດ, ການເຄື່ອນຍ້າຍ, ການຈັບຄູ່, ການວາງໄຂ່ ໃຫ້ແກ່ພະນັກງານວິຊາການ ຕະຫຼອດຮອດປະຊາ ຊົນບັນດາເຜົ່າມີສະຕິລະວັງຕົວ, ຮູ້ຈັກເຖິງພົນຮ້າຍ ແລະ ເປັນເຈົ້າການໃນການປ້ອງກັນ ແລະ ກຳຈັດຕັກແຕນຝູງໄມ້ປ່ອງ ຕິດພັນກັບການເຜີຍແຜ່ຜ່ານສື່ຕ່າງໆ ເປັນຕົ້ນ: ໂທລະພາບ, ໜັງສືພິມ, ວິທະຍຸ ແລະ ໂທລະໂຄ່ງປະຈຳບ້ານ;
2. ໃຫ້ ກົມປູກຝັງ ສົມທົບຂະແໜງການທີ່ກ່ຽວຂ້ອງຂັ້ນສູນກາງ, ພະແນກກະສິກຳ ແລະ ປ່າໄມ້ແຂວງຫຼວງພະບາງ, ແຂວງຫົວພັນ, ແຂວງຜົ້ງສາລີ, ແຂວງຊຽງຂວາງ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງກ່ຽວຂ້ອງ ຮີບຮ້ອນຈັດຕັ້ງປະຕິບັດຄຳສັ່ງ ສະບັບເລກທີ 28/ນຍ, ລົງວັນທີ 16 ສິງຫາ 2016 ໂດຍສ້າງເປັນແຜນ

ໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ ຄື:

**2.1 ໄລຍະສັ້ນ (ແຕ່ນີ້ຮອດທ້າຍປີ 2016) ໃຫ້ເລັ່ງໃສ່ບາງວຽກສຳຄັນຕົ້ນຕໍ ດັ່ງນີ້:**

- ສືບຕໍ່ລົງສຳຫຼວດ, ຕິດຕາມ ແລະ ເຝົ້າລະວັງ ພຶດຕິກຳການເຄື່ອນຍ້າຍ ແລະ ຈຸດວາງໄຂ່ຂອງຕັກແຕນຝູງໄມ້ປ່ອງ ເພື່ອເກັບກຳຂໍ້ມູນຄວາມເສຍຫາຍ, ກຳນົດແຜນການ, ມາດຕະການປ້ອງກັນ ແລະ ກຳຈັດໃຫ້ມີປະສິດທິພາບ ແລະ ມີຜົນກະທົບໜ້ອຍທີ່ສຸດຕໍ່ເສດຖະກິດ-ສັງຄົມ ແລະ ສິ່ງແວດ;
- ເອົາໃຈໃສ່ປ້ອງກັນ ແລະ ກຳຈັດ ຕັກແຕນຝູງໄມ້ປ່ອງ ດ້ວຍຫຼາຍວິທີ ໂດຍສະເພາະນຳໃຊ້ເຕັກນິກພູມປັນຍາຊາວບ້ານ ເຊັ່ນ: ຈູດພືດຕ່າງໆເພື່ອຂັບໄລ່, ໃຊ້ຕາໜ່າງກວດ ແລະ ເກັບທຳລາຍຖິ້ມ ຫຼື ນຳໃຊ້ຢາປາບສັດຕູພືດທີ່ມີຜົນກະທົບໜ້ອຍຕໍ່ສິ່ງແວດລ້ອມ, ສີດພົ່ນຕາມພື້ນທີ່ພົບເຫັນຝູງຕັກແຕນ ເພື່ອຫຼຸດຜ່ອນປະຊາກອນຕັກແຕນທີ່ຈະລົງວາງໄຂ່ໃນລຸ້ນຕໍ່ໄປ ໃຫ້ສຳເລັດໃນເດືອນພະຈິກ 2016;
- ກະກຽມຈັດກອງປະຊຸມຕີລາຄາຖອດຖອນບົດຮຽນ ກ່ຽວກັບວຽກງານປ້ອງກັນ ແລະ ກຳຈັດຕັກແຕນຝູງໄມ້ປ່ອງ ປະຈຳປີ 2016 ພ້ອມທັງກຳນົດແຜນການ ປະຈຳປີ 2017 ໃຫ້ສຳເລັດໃນເດືອນທັນວາ 2016 ນີ້.

**2.2 ສຳລັບໄລຍະກາງ (ປີ 2017) ໃຫ້ເລັ່ງໃສ່ວຽກສຳຄັນ ດັ່ງນີ້:**

- ຈັດຝຶກອົບຮົມ ໃຫ້ວິຊາການຂັ້ນແຂວງ, ຂັ້ນເມືອງ ແລະ ຊາວກະສິກອນ ໃນພື້ນທີ່ລະບາດ ຈຳນວນ 20 ເມືອງ ແລະ 7 ແຂວງ ທີ່ມີຄວາມສ່ຽງ ກ່ຽວກັບການສຳຫຼວດ, ການເຝົ້າລະວັງ, ວິທີປ້ອງກັນ ແລະ ກຳຈັດ ດ້ວຍເຕັກນິກພູມປັນຍາຊາວບ້ານ ແລະ ເຕັກນິກວິທະຍາສາດ ໃຫ້ສຳເລັດໃນລະຫວ່າງເດືອນມັງກອນ ເຖິງ ເດືອນກຸມພາ 2017;
- ສືບຕໍ່ສຳຫຼວດ, ຕິດຕາມ ແລະ ເຝົ້າລະວັງການແຕກໂຕອ່ອນຂອງຕັກແຕນ ພ້ອມທັງປະເມີນຄວາມໜາແໜ້ນຂອງປະຊາກອນຕັກແຕນ ເພື່ອກຳນົດເວລາການສີດພົ່ນຢາຄວບຄຸມໃຫ້ເໝາະສົມໃນແຕ່ລະພື້ນທີ່ ແລະ ດຳເນີນການສີດພົ່ນຢາປ້ອງກັນ ແລະ ກຳຈັດ ໃນໄລຍະເປັນໂຕອ່ອນ (ໄລຍະທີ 2-4) ໃຫ້ສຳເລັດໃນລະຫວ່າງເດືອນ ເມສາ ເຖິງ ເດືອນມິຖຸນາ 2017;
- ສືບຕໍ່ສີດພົ່ນຢາ ໃນຊ່ວງຕັກແຕນມີປີກແກ່ກ່ອນຈະບິນ ໄປຫາພື້ນທີ່ເຂົ້າໄຮ່, ພື້ນທີ່ປູກສາລີ ແລະ ພືດອື່ນໆ ໃຫ້ສຳເລັດໃນລະຫວ່າງເດືອນກໍລະກົດ ເຖິງ ເດືອນກັນຍາ 2017 ໂດຍການນຳໃຊ້ວິທີການສີດພົ່ນຢາ ໃນຊ່ວງຕັກແຕນເຄື່ອນຍ້າຍຝູງ;
- ດຳເນີນການຕິດຕາມ, ເຝົ້າລະວັງການເຄື່ອນຍ້າຍ, ການຈັບຄູ່, ຈຸດຈະວາງໄຂ ແລະ ຜົນເສຍຫາຍທີ່ອາດຈະເກີດຂຶ້ນ ຈາກການທຳລາຍຂອງຕັກແຕນຝູງໄມ້ປ່ອງ ໃຫ້ສຳເລັດໃນລະຫວ່າງເດືອນກັນຍາ ເຖິງເດືອນຕຸລາ 2017 ເພື່ອກຳນົດແຜນກຳຈັດ ແລະ ຄວບຄຸມ ໃນປີ 2018.

**2.3 ສ່ວນໄລຍະຍາວ (ປີ 2018-2020) ໃຫ້ເອົາໃຈໃສ່ ດັ່ງນີ້:**

- ສຶກສາ ແລະ ຄົ້ນຄວ້າ ລະບົບນິເວດວິທະຍາ (ວົງຈອນຊີວິດ), ເຕັກນິກການປ້ອງກັນ ແລະ ກຳຈັດພ້ອມທັງທົດສອບວິທີການປ້ອງກັນ ດ້ວຍວິທີເຊື້ອຊີວະວິທະຍາ ແລະ ດຳເນີນການນຳໃຊ້ຢູ່ພາກສະໜາມ;
- ພັດທະນາລະບົບຕາໜ່າງ ຫຼື ສູນ, ສະຖານີປ້ອງກັນພືດ ໃຫ້ມີຄວາມເຂັ້ມແຂງ ຢູ່ ໃນ 3 ແຂວງ **(ແຂວງຫຼວງພະບາງ, ແຂວງຊຽງຂວາງ ແລະ ແຂວງຫົວພັນ)** ເພື່ອປ້ອງກັນ ແລະ ກຳຈັດສັດຕູພືດຊະນິດຕ່າງໆທີ່ອາດຈະເກີດຂຶ້ນ ໃນແຕ່ລະດູການຜະລິດ;
- ເພີ່ມທະວີການປະສານງານ, ແລກປ່ຽນບົດຮຽນ ແລະ ຮ່ວມມືກັບ ສປ ຈີນ, ສສ ຫວຽດນາມ, ຣາຊະ

ອານາຈັກໄທ ແລະ ປະເທດອື່ນ ເພື່ອສ້າງຄວາມສາມາດໃນການປ້ອງກັນ ແລະ ຄວບຄຸມຕັກແຕນຝູງໄມ້ປ່ອງຢ່າງມີປະສິດທິຜົນ ໂດຍສະເພາະໃນເຂດທີ່ມີຄວາມສ່ຽງ ແລະ ເຂດຊາຍແດນລະຫວ່າງປະເທດ.

3 ໃຫ້ ພະແນກກະສິກຳ ແລະ ປ່າໄມ້ ແຂວງຫຼວງພະບາງ, ແຂວງຫົວພັນ, ແຂວງຜົ້ງສາລີ ແລະ ແຂວງຊຽງຂວາງ ສືບຕໍ່ເປັນເຈົ້າການ ສ້າງແຜນການລະອຽດ (**ແຜນວຽກ, ແຜນຄົນ, ແຜນງົບປະມານ ແລະ ແຜນຄວາມຕ້ອງການເຄື່ອງມືອຸປະກອນ**) ເພື່ອສະເໜີຄະນະກຳມະການປ້ອງກັນ ແລະ ຄວບຄຸມໄພພິບັດຂັ້ນແຂວງ ແລະ ສະພາປະຊາຊົນແຂວງ ອະນຸມັດນຳໃຊ້ງົບປະມານກອງທຶນໄພພິບັດ ເຂົ້າໃນການປ້ອງກັນ ແລະ ກຳຈັດການລະບາດຂອງຕັກແຕນຝູງໄມ້ປ່ອງ;

4 ໃຫ້ ກົມແຜນການ ແລະ ການຮ່ວມມື, ກົມປູກຝັງ ເປັນໃຈກາງປະສານສົມທົບກັບ ຂະແໜງການ ແລະ ອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງ ສືບຕໍ່ຍາດແຍ່ງການຊ່ວຍເຫຼືອດ້ານທຶນຮອນ, ເຕັກນິກວິຊາການ ແລະ ເຄື່ອງມືອຸປະກອນຮັບໃຊ້ເຂົ້າໃນວຽກງານການປ້ອງກັນ ແລະ ກຳຈັດຕັກແຕນຝູງໄມ້ປ່ອງ;

5 ໃຫ້ ກົມປູກຝັງ ສົມທົບກັບ ພະແນກກະສິກຳ ແລະ ປ່າໄມ້ແຂວງຫຼວງພະບາງ ຄົ້ນຄວ້າສະຖານທີ່ສ້າງສູນປະສານງານປະຈຳພາກເໜືອຢູ່ແຂວງຫຼວງພະບາງ ກ່ຽວກັບການປ້ອງກັນ ແລະ ກຳຈັດຕັກແຕນຝູງໄມ້ປ່ອງ ເພື່ອແນໃສ່ເປັນຈຸດປະສານງານລະຫວ່າງ ແຂວງຫຼວງພະບາງ, ແຂວງຫົວພັນ, ແຂວງຜົ້ງສາລີ, ແຂວງຊຽງຂວາງ ແລະ ບັນດາແຂວງພາກເໜືອ ທີ່ມີຄວາມສ່ຽງຈາກການລະບາດຂອງຕັກແຕນຝູງໄມ້ປ່ອງ;

6 ສຳລັບ ແຂວງໄຊຍະບູລີ, ແຂວງບໍ່ແກ້ວ, ແຂວງຫຼວງນ້ຳທາ, ແຂວງອຸດົມໄຊ, ແຂວງວຽງຈັນ ແລະ ແຂວງໄຊສົມບູນ ທີ່ມີພື້ນທີ່ຄວາມສ່ຽງຕໍ່ການລະບາດຂອງຕັກແຕນຝູງໄມ້ປ່ອງ ແລະ ບັນດາແຂວງພາກກາງ ແລະ ພາກໃຕ້ ໃຫ້ພະແນກກະສິກຳ ແລະ ປ່າໄມ້ແຂວງ ເປັນເຈົ້າການຕິດຕາມ ແລະ ເຝົ້າລະວັງຢ່າງເປັນປົກກະຕິ. ໃນກໍລະນີພົບເຫັນການເຄື່ອນຍ້າຍ ຫຼື ປະກົດເຫັນຕັກແຕນຝູງໄມ້ປ່ອງ ເຂົ້າມາໃນພື້ນທີ່ຂອງຕົນ ຕ້ອງປ້ອງກັນ ແລະ ກຳຈັດໃຫ້ທັນການ ແລະ ລາຍງານໃຫ້ກະຊວງກະສິກຳ ແລະ ປ່າໄມ້, ສ້າງແຜນຄວບຄຸມສຸກເສີນສົ່ງໃຫ້ຄະນະກຳມະການ ຄຸ້ມຄອງໄພພິບັດຂັ້ນແຂວງ ພິຈາລະນາສະໜັບສະໜູນຕາມຄວາມຈຳເປັນ;

7 ມອບໃຫ້ ກົມປູກຝັງ, ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງວຽງຈັນ ເປັນເຈົ້າການ ເຜີຍແຜ່ ເຊື່ອມຊຶມ ແລະ ຜັນຂະຫຍາຍຄຳແນະນຳສະບັບນີ້ ອອກເປັນໜ້າວຽກອັນລະອຽດ ແລະ ຈັດຕັ້ງປະຕິບັດໃຫ້ທົ່ວເຖິງ, ລົງເລິກເຖິງຮາກຖານກຸ່ມບ້ານ ແລະ ບ້ານ ໃຫ້ມີປະສິດທິຜົນສູງ. ຜ່ານການຈັດຕັ້ງປະຕິບັດ ມີຂໍ້ສະດວກ, ຫຍຸ້ງຫຍາກແນວໃດ ໃຫ້ລາຍງານການນຳກະຊວງກະສິກຳ ແລະ ປ່າໄມ້ ເປັນປົກກະຕິ ເພື່ອຫາວິທີແກ້ໄຂຢ່າງທັນການ;

8 ຄຳແນະນຳ ສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້**

ບ່ອນນຳສົ່ງ:

1. ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ 01 ສະບັບ (ໃຊ້ຕາງລາຍງານ);
2. ຄະນະກຳມະການປ້ອງກັນ ແລະ ຄວບຄຸມໄພພິບັດແຫ່ງຊາດ 01 ສະບັບ (ເພື່ອຊາບ);
3. ກ/ຊ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ 01 ສະບັບ (ເພື່ອຊ່ວຍອອກຂ່າວ);
4. ອົງການປົກຄອງແຂວງ, ນວ ບ່ອນລະ 01 ສະບັບ (ເພື່ອຊ່ວຍຊຸກຍູ້);
5. ເກັບຮັກສາໄວ້ 01 ສະບັບ.

ລຽນ ທິແກ້ວ